


# ກອງປະຊຸມປຶກສາຫາລື ກ່ຽວກັບ ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ ຂອງ ໂຄງການໄຟຟ້າພະລັງງານແສງຕາເວັນ 580 ເມກາວັດ




ໃນວັນທີ 14 ມິນາ 2024 ທີ່ຜ່ານມາ ຢູ່ທີ່ນະຄອນຫຼວງວຽງຈັນ, ກົມສິ່ງແວດລ້ອມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ຮ່ວມກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ພຊສ) ແຂວງຫຼວງນ້ຳທາ ໄດ້ຈັດກອງປະຊຸມປຶກສາຫາລື ແບບມີສ່ວນຮ່ວມຂັ້ນແຂວງ/ສູນກາງ ເພື່ອຜ່ານບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ ແລະ ພ້ອມດ້ວຍແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ຂອງ ໂຄງການໄຟຟ້າພະລັງງານແສງຕາເວັນ 580 ເມກາວັດ, ໂດຍການເປັນປະທານຮ່ວມຂອງທ່ານ ພູວົງ ຫຼວງໄຊຊະນະ, ຮອງລັດຖະມົນຕີ ກຊສ, ທ່ານ ສີວິໄລ ບັນແກ້ວ, ຮອງເຈົ້າແຂວງຫຼວງນ້ຳທາ, ມີທ່ານ ຄຳພອງ ອິນມານີ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ທ່ານ ບຸນຄົງ ພົມມະສອນ, ຮອງເຈົ້າເມືອງຫຼວງນ້ຳທາ, ທ່ານຮອງຫົວໜ້າກົມສິ່ງແວດລ້ອມ, ຕາງໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງຫຼວງນ້ຳທາ, ພ້ອມບັນດາ ຜູ້ຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ/ທ້ອງຖິ່ນ, ຜູ້ຕາງໜ້າ ບໍລິສັດ ຊີຈີເອັນ ເອເນີຈີ ເຕັກໂນໂລຢີ (ລາວ) ຈຳກັດ ແລະ ບໍລິສັດທີ່ປຶກສາລາວ ວິສະວະກຳ ດ້ານສິ່ງແວດລ້ອມ ຈຳກັດຜູ້ດຽວ ເຂົ້າຮ່ວມ.





ກອງປະຊຸມ ຄັ້ງນີ້, ບັນດາຜູ້ຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງ ໄດ້ຮັບຟັງການລາຍງານສະພາບລວມ, ປະຫວັດຄວາມເປັນມາ, ຮ່າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ ແລະ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ຂອງໂຄງການໄຟຟ້າພະລັງງານແສງຕາເວັນ, ຕັ້ງຢູ່ເມືອງຫຼວງນໍ້າທາ, ແຂວງຫຼວງນໍ້າທາ, ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງ ບໍລິສັດ ຊີຈີເອັນ ເອເນີຈີ ເຕັກໂນໂລຢີ (ລາວ) ຈໍາກັດ ກັບລັດຖະບານ ສປປລາວ ໃນວນທີ 16 ສິງຫາ 2023. ຊຶ່ງມີກໍາລັງການຕິດຕັ້ງໄຟຟ້າ 580 ເມກາວັດ. ໄດ້ວ່າຈ້າງບໍລິສັດ ລາວວິສະວະກໍາ ດ້ານສິ່ງແວດລ້ອມ ຈໍາກັດຜູ້ດຽວ ເປັນຜູ້ດໍາເນີນການສຶກສາ ແລະ ສ້າງບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ. ໂຄງການດັ່ງກ່າວຈະນໍາໃຊ້ເນື້ອທີ່ດິນ ຈໍານວນ 1.528 ເຮັກຕາ, ມີໄລຍະເວລາກໍ່ສ້າງ 18 ເດືອນ, ມີອາຍຸສໍາປະທານໂຄງການ ລວມທັງໝົດ 25 ປີ ແລະ ມູນຄ່າການລົງທຶນທັງໝົດ775.642.379 ໂດລາສະຫະລັດ.

ຫຼັງຈາກນັ້ນ ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ມີຄໍາຖາມເຈາະຈີ້ມ ແລະ ຄໍາແນະນໍາໃຫ້ໂຄງການດໍາເນີນການປັບປຸງເອກະສານດັ່ງກ່າວ ເປັນຕົ້ນແມ່ນ ທີ່ດິນທໍາການຜະລິດ, ການດໍາລົງຊີວິດຂອງປະຊາຊົນ ໂດຍສະເພາະໃນຊ່ວງໄລຍະກໍ່ສ້າງໂຄງການ, ສະນັ້ນ, ເຈົ້າຂອງໂຄງການຕ້ອງໄດ້ມີມາດຕະການປ້ອງກັນ, ຫຼຸດຜ່ອນ ແລະ ແກ້ໄຂຢ່າງເໝາະສົມ, ການພັດທະນາໂຄງການຕ້ອງຄຽງຄູ່ໄປກັບການປົກປັກຮັກສາສິ່ງແວດລ້ອມ ແລະ ເຮັດໃຫ້ວຽກງານສິ່ງແວດລ້ອມໄປຕາມທິດສີຂຽວ ແລະ ຍືນຍົງ. ຊຶ່ງໂຄງການຕ້ອງໄດ້ດໍາເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ໂດຍໃຫ້ສອດຄ່ອງກັບ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ແລະ ດໍາລັດວ່າດ້ວຍ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 389/ລບ, ລົງວັນທີ 20 ຕຸລາ 2022.

ໃນຕອນທ້າຍ, ທ່ານ ຮອງລັດຖະມົນຕີ ກຊສ ໄດ້ເນັ້ນໃຫ້ເຈົ້າຂອງໂຄງການ ເອົາໃຈໃສ່ປັບປຸງຮ່າງບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ຕາມຄໍາຄິດເຫັນຂອງທຸກພາກສ່ວນໃນກອງປະຊຸມຄັ້ງນີ້ ແລະ ນໍາສົ່ງມາຍັງ ກຊສ ເພື່ອດໍາເນີນການທົບທວນຕື່ມ ແລະ ພິຈາລະນາ ກ່ຽວກັບ ການສະເໜີອອກໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມ, ສິ່ງສໍາຄັນ ຖ້າເມື່ອໃດໂຄງການໄດ້ຮັບໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມແລ້ວ, ໂຄງການຕ້ອງປະຕິບັດມາດຕະການສິ່ງແວດລ້ອມ ດັ່ງທີ່ລະບຸໃນເອກະສານດັ່ງກ່າວ ຢ່າງເຂັ້ມງວດ ເພື່ອຫຼີກລ່ຽງບັນຫາຜົນກະທົບທີ່ຈະເກີດຂຶ້ນຕາມມາພາຍຫຼັງ.




ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮອບດ້ານ 18 ແຂວງ




(http://nas.monre.gov.la:8080/share.cgi?ssid=0EyjXpe)

ແຈ້ງການປະມູນ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບເອກະລາດປະຊາທິປະໄຕເອກະພາບວັດທະນະຖາວອນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ກົມແຜນການ ແລະ ການເງິນ

ເລກທີ 1720 /ກຊສ.ກຜງ

ນະຄອນຫຼວງວຽງຈັນ, ວັນທີ ໒໗ ພຶດສະພາ 2024

## ແຈ້ງການປະມຸນ

**ເຖິງ:** ບຸກຄົນ, ນິຕິບຸກຄົນ, ຫຼື ການຈັດຕັ້ງຕ່າງໆ.

**ເລື່ອງ:** ການປະມູນຈັດຊື້-ຈັດຈ້າງ ຄອມພິວເຕີ້ໂນດບຸກ

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວວຽກງານ ຂອງກົມແຜນການ ແລະ ການເງິນ ສະບັບເລກທີ 1283/ກຊສ, ລົງວັນທີ 05 ເມສາ 2022;
- ອີງຕາມ ແຜນງົບປະມານ ປະຈຳປີ 2024 ຂອງ ກະຊວງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ;
- ອີງຕາມ ແຜນຈັດຊື້-ຈັດຈ້າງຄອມພິວເຕີ້ໂນດບຸກ ເພື່ອຮັບໃຊ້ວຽກງານຂະຫຍາຍລະບົບຖານຂໍ້ມູນການບໍລິຫານການເງິນ-ການບັນຊີ (ໂປຼແກຼມບັນຊີຄູ່) ທີ່ຈະສະໜອງ ໃຫ້ແກ່ ພຊສ ແຂວງນະຄອນຫຼວງ ແລະ 9 ຕົວເມືອງ ຂອງນະຄອນຫຼວງວຽງຈັນ ປະຈຳປີ 2024 ສະບັບເລກທີ 1748 /ກຊສ.ກຜງລົງວັນທີ 24 ພຶດສະພາ 2024.

ກົມແຜນການ ແລະ ການເງິນ (ກຊສ) ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຜູ້ທີ່ມີຄວາມສົນໃຈການປະມູນຊາບວ່າ: ປະຈຸບັນກົມແຜນການ ແລະ ການເງິນ ຈຸດປະສົງ: ເພື່ອເຂົ້າຮ່ວມການປະມູນຈັດຊື້-ຈັດຈ້າງແບບສົມທຽບລາຄາໃນການຈັດຊື້ ພິວເຕີ້ໂນດບຸກ **ຈຳນວນ 21 ໜ່ວຍ** ເພື່ອຮັບໃຊ້ວຽກງານຂະຫຍາຍລະບົບຖານຂໍ້ມູນການບໍລິຫານການເງິນ-ການບັນຊີ (ໂປຼແກຼມບັນຊີຄູ່) ທີ່ຈະສະໜອງ ໃຫ້ແກ່ ພຊສ ແຂວງ/ນະຄອນຫຼວງ ແລະ 9 ຕົວເມືອງ ຂອງນະຄອນຫຼວງວຽງຈັນ ປະຈຳປີ 2024.

ຫາກທ່ານທີມີຄວາມສົນໃຈຢາກເຂົ້າຮ່ວມປະມູນແຂ່ງຂັນລາຄາ,ລາຍລະອຽດແມ່ນໃຫ້ຕິດຕໍ່ ແລະ ຊື້ຊອງປະມູນໄດ້ທີ່ຫ້ອງການ ກົມແຜນການ ແລະ ການເງິນ (ກຊສ) **ບ້ານ:** ດົງນາໂຊກໄຕ້ **ເມືອງ:** ສີໂຄດຕະບອງ ນະຄອນຫຼວງວຽງຈັນ, ລາຄາຂາຍຊອງປະມູນ ລາຄາ 1.000.000 ກີບ/ຊອງ, ເງິນຄ້ຳປະກັນການປະມູນ 10% ເປັນເງິນກີບ.

ການຂາຍຊອງປະມູນແມ່ນເລີ່ມແຕ່ວັນທີ 17 ມິຖຸນາ 2024 ຫາວັນທີ 01 ກໍລະກົດ 2024 (ວັນ ແລະ ເວລາລັດຖະການ) ແລະ ຈະເປີດຊອງປະມູນໂດຍຊ້ອງໜ້າຄະນະກຳມະການ ແລະ ຜູ້ເຂົ້າຮ່ວມປະມູນໃນວັນທີ 05 ກໍລະກົດ 2024 ເວລາ 10:00 ໂມງ ຂອງວັນທີ 05 ກໍລະກົດ 2024, ຢູ່ທີ່ຫ້ອງປະຊຸມກົມແຜນການ ແລະ ການເງິນ (ຫ້ອງ 302).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານຜູ້ທີ່ມີຄວາມສົນໃຈຢາກປະມູນຊາບ

ຫົວໜ້າກົມ

ປອ ສຸກສະໜອນ ປະຖົມມະວົງສ໌

ເບີໂທຕິດຕໍ່:

ໂທ: ທ້າວ ພອນປະເສີດ ແກ້ວມະນີວົງ 020 78923100

(http://www.monre.gov.la/gweb/backend/web/index.php?r=site/detail&id=630)

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ